ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານ

ເລກທີ 1685 /ປທສ
ນະຄອນຫຼວງວຽງຈັນ, ວັນທີ 5 ເມສາ 2017

# ຂໍ້ຕົກລົງ

## ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກົມເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 22/ນຍ, ລົງວັນທີ 16/01/2017, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.
- ອີງຕາມ ການຄົ້ນຄວ້າເຫັນດີເປັນເອກະພາບ ຂອງຄະນະນຳກະຊວງ ປທສ.

ລັດຖະມົນຕີ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ອອກຂໍ້ຕົກລົງ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃນການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກົມເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ກົມເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ຊື່ຫຍໍ້ວ່າ "ກຕຂ" ( ເປັນພາສາສາກົນ Department of Information and Communication Technology "DICT" ) ແມ່ນກົມໜຶ່ງ ທີ່ສັງກັດໃນໂຄງປະກອບການຈັດຕັ້ງຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ມີພາລະບົດບາດເປັນເສນາທິການ ໃຫ້ແກ່ກະຊວງໃນການຄຸ້ມຄອງມະຫາພາກ ທາງດ້ານວຽກງານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ.

### ໝວດທີ 2
### ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

3.1 ຄົ້ນຄວ້າ ຜັນຂະຫຍາຍ ແຜນຍຸດທະສາດ, ນະໂຍບາຍ ເປັນແຜນການ, ແຜນງານ ແລະ ໂຄງການຂອງກົມ ເພື່ອນຳສະເໜີຕໍ່ກະຊວງພິຈາລະນາຮັບຮອງ ແລະ ຮັບຜິດຊອບຈັດຕັ້ງປະຕິບັດແຜນດັ່ງກ່າວ;

3.2 ຄົ້ນຄວ້າ, ສ້າງ, ປັບປຸງ ແລະ ນໍາສະເໜີຂັ້ນເທິງ ອອກແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ນິຕິກໍາຕ່າງໆ ໃນການຄຸ້ມຄອງດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ລວມທັງບໍລິການທາງເອເລັກໂຕຣນິກ;

3.3 ໂຄສະນາ, ເຜີຍແຜ່ ແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ, ນິຕິກໍາ, ລະບຽບການ ແລະ ຜົນສໍາເລັດທາງດ້ານວິຊາການກ່ຽວກັບເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ;

3.4 ຊີ້ນໍາ, ຕິດຕາມ ແລະ ກວດກາ ຫົວໜ່ວຍທຸລະກິດດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ໃນຂອບເຂດກົມຮັບຜິດຊອບ ເພື່ອດໍາເນີນທຸລະກິດໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມກົດໝາຍ ແລະ ລະບຽບການຕ່າງໆ;

3.5 ຄຸ້ມຄອງການນໍາເຂົ້າ ແລະ ຈໍາໜ່າຍອຸປະກອນເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ແລະ ໂທລະຄົມມະນາຄົມ ໃຫ້ສອດຄ່ອງກັບມາດຕະຖານສາກົນ ໃນແຕ່ລະໄລຍະ;

3.6 ຄຸ້ມຄອງ ແລະ ດັດສົມອັດຕາຄ່າທໍານຽມ ແລະ ຄ່າບໍລິການວິຊາການດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ໃນຂອບເຂດກົມຮັບຜິດຊອບ;

3.7 ພິຈາລະນາ ແລະ ຮັບຮອງທາງດ້ານເຕັກນິກວິຊາການກ່ຽວກັບເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ;

3.8 ເກັບກໍາສະຖິຕິ, ດັດສະນີຕົວຊີ້ວັດການນໍາໃຊ້ ແລະ ການພັດທະນາ ທາງດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ເພື່ອປະເມີນຜົນ, ສະຫຼຸບ, ຕີລາຄາ ແລະ ຖອດຖອນບົດຮຽນໃນການຈັດຕັ້ງປະຕິບັດແຜນການ ແລະ ງົບປະມານ;

3.9 ເປັນໃຈກາງປະສານສົມທົບກັບບັນດາຂະແໜງການ ແລະ ທ້ອງຖິ່ນ ຄຸ້ມຄອງ, ສົ່ງເສີມ, ພັດທະນາ ຕິດຕາມ ກວດກາ ແລະ ລາຍງານ ສະພາບການເຄື່ອນໄຫວວຽກງານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ໃນຂອບເຂດທົ່ວປະເທດ ໃຫ້ການນໍາກະຊວງ ຢ່າງເປັນປົກກະຕິ;

3.10 ເກັບກໍາ, ບັນທຶກ, ກວດກາ, ຢັ້ງຢືນຜົນງານ ແລະ ຫົວຄິດປະດິດສ້າງ ດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ແລະ ນໍາສະເໜີລັດຖະບານ ປະກາດກຽດຕິຄຸນ ຫຼື ຍ້ອງຍໍຜົນງານ ຕາມຄວາມເໝາະສົມ;

3.11 ສ້າງ, ຝຶກອົບຮົມ, ຍົກລະດັບ ແລະ ພັດທະນາວິຊາການດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ໃຫ້ບັນດາຂະແໜງການຢູ່ສູນກາງ ແລະ ທ້ອງຖິ່ນ;

3.12 ພົວພັນ ຮ່ວມມື ກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ຕາມການເຫັນດີຂອງ ຄະນະນໍາກະຊວງ;

3.13 ສ້າງແຜນການເຄື່ອນໄຫວ ແລະ ແຜນງົບປະມານປະຈໍາປີ ເພື່ອສະເໜີຕໍ່ກະຊວງ ພິຈາລະນາຮັບຮອງ;

3.14 ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະນໍາກະຊວງ.

**ມາດຕາ 4 ຂອບເຂດສິດ**

4.1 ສະເໜີສ້າງ, ປັບປຸງ ຫຼື ລຶບລ້າງ ບັນດານິຕິກໍາຕ່າງໆ ໃນການຄຸ້ມຄອງ ວຽກງານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ຕາມການເຫັນດີຂອງຄະນະນໍາກະຊວງ;

4.2 ອອກແຈ້ງການ, ບົດແນະນໍາ, ຂໍ້ແນະນໍາ ກ່ຽວກັບການປະຕິບັດຂໍ້ຕົກລົງ ແລະ ລະບຽບອື່ນໆ ຕາມການເຫັນດີ ຂອງຄະນະນໍາກະຊວງ;

4.3 ຕິດຕາມ, ກວດກາ ການປະຕິບັດບັນດານິຕິກໍາຕ່າງໆດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ;

4.4 ອອກ, ຕໍ່, ໂຈະ ຫຼື ຖອນໃບອະນຸຍາດ ດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານຕາມການເຫັນດີຂອງຄະນະນຳກະຊວງ ເປັນຕົ້ນ ບໍລິການອິນເຕີເນັດກາເຟ; ບໍລິການຄຣາວ (Cloud Computing); ສູນຂໍ້ມູນ (Data Center); ສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ (Content Center); ບໍລິການທີ່ປຶກສາ-ຝຶກອົບຮົມ; ບໍລິການຄວາມປອດໄພດ້ານເຄືອຂ່າຍ ແລະ ຂໍ້ມູນຂ່າວສານ (Network Security and Data Protection); ບໍລິການໃບຮັບຮອງເອເລັກໂຕຼນິກ (Certificate Authority); ຜະລິດ, ປະກອບ, ນຳເຂົ້າ, ສົ່ງອອກ, ຈຳໜ່າຍ ແລະ ຕິດຕັ້ງ ອຸປະກອນໄອຊີທີ; ບໍລິການສ້ອມແປງອຸປະກອນໄອຊີທີ; ບໍລິການສ້າງ, ພັດທະນາ ແລະ ຈຳໜ່າຍ ຊອບແວ; ບໍລິການໂອທີທີ (Over-The-Top), ຄອນເຊັນເຕີ ແລະ ສື່ສັງຄົມອອນລາຍ (Call Center and Social Media);

4.5 ອອກໃບອະນຸຍາດດ້ານວິຊາການ ໃນການນຳເຂົ້າ ແລະ ຈຳໜ່າຍອຸປະກອນເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ແລະ ໂທລະຄົມມະນາຄົມ;

4.6 ອອກໃບສັ່ງມອບ, ເກັບກຳຄ່າທຳນຽມ ແລະ ຄ່າບໍລິການ ກ່ຽວກັບການປະກອບການດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ໃນຂອບເຂດກົມຮັບຜິດຊອບ;

4.7 ຈັດສຳມະນາ ດ້ານນະໂຍບາຍ, ນິຕິກຳ ແລະ ຜົນສຳເລັດທາງດ້ານວິຊາການ ກ່ຽວກັບເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ;

4.8 ພົວພັນ, ເຊັນບົດບັນທຶກ, ເຊັນສັນຍາ, ອານຸສັນຍາ, ຮ່ວມມື, ຍາດແຍ່ງການຊ່ວຍເຫຼືອ, ການລົງທຶນຈາກທັງພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍຂອງຄະນະນຳກະຊວງ;

4.9 ສະເໜີ ສ້າງຕັ້ງ, ປັບປຸງ, ຍຸບເລີກ ກົງຈັກການຈັດຕັ້ງ, ແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ ແລະ ສັບຊ້ອນພະນັກງານຂອງກົມ ໃຫ້ສອດຄ່ອງກັບສະພາບການຂະຫຍາຍຕົວຂອງວຽກງານໃນແຕ່ລະໄລຍະ;

4.10 ສະເໜີປະຕິບັດນະໂຍບາຍ, ເລື່ອນຊັ້ນ/ຂັ້ນ, ບຳລຸງກໍ່ສ້າງ ແລະ ປະຕິບັດວິໄນຕໍ່ພະນັກງານພາຍໃນກົມ;

4.11 ຄຸ້ມຄອງ ນຳໃຊ້ ງົບປະມານ, ພາຫະນະ, ວັດຖຸ, ອຸປະກອນ, ຊັບສິນຂອງກົມ ຕາມການອະນຸມັດຂອງຄະນະນຳກະຊວງ;

4.12 ນຳໃຊ້ສິດອື່ນ ຕາມການມອບໝາຍຂອງຄະນະນຳກະຊວງ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 5 ໂຄງປະກອບກົງຈັກ**

ກົມເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ປະກອບມີ 04 ພະແນກ ດັ່ງນີ້:

5.1 ພະແນກ ບໍລິຫານ-ຈັດຕັ້ງ;

5.2 ພະແນກ ຄຸ້ມຄອງ ແລະ ກວດກາ;

5.3 ພະແນກ ແຜນການ ແລະ ພັດທະນາ;

5.4 ພະແນກ ເສດຖະກິດດິຈິຕອນ.

ມາດຕາ 6 ໂຄງປະກອບບຸກຄະລາກອນ

ກົມເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ປະກອບດ້ວຍ:

6.1 ຫົວໜ້າກົມ 01 ທ່ານ, ເປັນຜູ້ຮັບຜິດຊອບຕໍ່ລັດຖະມົນຕີກະຊວງ ແລະ ຮອງລັດຖະມົນຕີຜູ້ຊີ້ນໍາ ກ່ຽວກັບຜົນສໍາເລັດ ແລະ ຂໍ້ຂາດຕົກບົກຜ່ອງໃນການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງກົມ; ໃນກໍລະນີຕິດຂັດ ຫົວໜ້າກົມຕ້ອງມອບສິດໃຫ້ຮອງຫົວໜ້າກົມທ່ານໃດໜຶ່ງເປັນຜູ້ຮັກສາການແທນ.

6.2 ຮອງຫົວໜ້າກົມຈໍານວນໜຶ່ງ, ຊ່ວຍຫົວໜ້າກົມໃນການຊີ້ນໍາຂົງເຂດວຽກງານໃດໜຶ່ງຕາມການແບ່ງງານ ແລະ ການມອບໝາຍ; ຮັບຜິດຊອບຕໍ່ຫົວໜ້າກົມ ກ່ຽວກັບຜົນສໍາເລັດ ແລະ ຂໍ້ຂາດຕົກບົກຜ່ອງຂອງຂົງເຂດວຽກງານທີ່ຕົນຊີ້ນໍາ;

ຮອງຫົວໜ້າກົມຜູ້ຮັກສາການແທນ ຕ້ອງລາຍງານວຽກງານທີ່ໄດ້ຈັດຕັ້ງປະຕິບັດໃນໄລຍະຮັກສາການແທນນັ້ນ ໃຫ້ຫົວໜ້າກົມ ພາຍຫຼັງກັບມາປະຈໍາການ.

6.3 ຫົວໜ້າ, ຮອງພະແນກ ແລະ ລັດຖະກອນວິຊາການຈໍານວນໜຶ່ງ, ປະຕິບັດວຽກງານຕາມພາລະບົດບາດ ແລະ ຕໍາແໜ່ງງານທີ່ກໍານົດໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້.

ສໍາລັບການບັນຈຸ, ຊັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການກໍານົດໄວ້.

ມາດຕາ 7 ໜ້າທີ່ ຂອງແຕ່ລະພະແນກ

7.1 ພະແນກ ບໍລິຫານ-ຈັດຕັ້ງ

1. ເປັນໃຈກາງປະສານງານ ແລະ ພົວພັນກັບພາກສ່ວນທີ່ກ່ຽວຂ້ອງ;
2. ສະເໜີແຜນພັດທະນາບຸກຄະລາກອນ, ກໍານົດຕໍາແໜ່ງງານ ແລະ ຄຸ້ມຄອງພະນັກງານຂອງກົມ;
3. ປະຕິບັດນະໂຍບາຍ, ລະບຽບວິໃນ, ປະເມີນຜົນ ແລະ ຍ້ອງຍໍ ຕໍ່ພະນັກງານຂອງກົມ;
4. ຮັບຜິດຊອບວຽກງານບໍລິຫານ, ຫ້ອງການ ແລະ ຄຸ້ມຄອງ ເອກະສານຂາເຂົ້າ-ຂາອອກ;
5. ສັງລວມ, ຂຶ້ນແຜນ ແລະ ສະຫຼຸບ ປະຈໍາເດືອນ, ງວດ ແລະ ປີ ຂອງກົມ;
6. ຄຸ້ມຄອງ ວັດຖຸອຸປະກອນ, ພາຫະນະ ແລະ ຊັບສິນ ຂອງກົມ;
7. ປະຕິບັດໜ້າທີ່ ແລະ ສິດອື່ນໆ ຕາມການມອບໝາຍ ຂອງຄະນະກົມ.

7.2 ພະແນກ ຄຸ້ມຄອງ ແລະ ກວດກາ

1. ຄົ້ນຄ້ວາ ການຂໍຂຶ້ນທະບຽນວິສາຫະກິດ ດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ໃນຂອບເຂດກົມຮັບຜິດຊອບ;
2. ຄົ້ນຄ້ວາ ອອກ, ຕໍ່, ໂຈະ, ຍົກເລີກ ຫຼື ຖອນໃບອະນຸຍາດ ດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານໃນຂອບເຂດກົມຮັບຜິດຊອບ;
3. ຄົ້ນຄ້ວາ ແລະ ພິຈາລະນາ ອອກໃບອະນຸຍາດນໍາເຂົ້າ ແລະ ຈໍາໜ່າຍອຸປະກອນເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ-ໂທລະຄົມມະນາຄົມ;
4. ຄິດໄລ່, ອອກໃບສັ່ງມອບ ແລະ ເກັບກໍາຄ່າທໍານຽມ, ຄ່າບໍລິການ ຕໍ່ຜູ້ປະກອບການ ດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານໃນຂອບເຂດກົມຮັບຜິດຊອບ;
5. ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ;

6. ເກັບກຳ ແລະ ບັນທຶກສະຖິຕິການດຳເນີນທຸລະກິດ ດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ໃນຂອບເຂດກົມຮັບຜິດຊອບ;
7. ປະຕິບັດໜ້າທີ່ ແລະ ສິດອື່ນໆ ຕາມການມອບໝາຍຂອງຄະນະກົມ.

7.3 ພະແນກ ແຜນການ ແລະ ພັດທະນາ

1. ຜັນຂະຫຍາຍ ແຜນນະໂຍບາຍ ແລະ ຍຸດທະສາດ ມາເປັນແຜນການ, ແຜນງານ ແລະ ໂຄງການ ເພື່ອພັດທະນາ ແລະ ສົ່ງເສີມວຽກງານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ;
2. ຄົ້ນຄວ້າ ແລະ ພັດທະນາວຽກງານເຕັກນິກ ໃຫ້ແທດເໝາະກັບ ພາກພື້ນ ແລະ ສາກົນ ໃນແຕ່ລະໄລຍະ;
3. ຄົ້ນຄວ້າສ້າງກິດຈະກຳເຜີຍແຜ່ ແລະ ສົ່ງເສີມຄວາມຮູ້ດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
4 ຄົ້ນຄວ້າ ແລະ ພັດທະນາ ຮາດແວ ແລະ ຊອບແວ ດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ເພື່ອຮັບໃຊ້ພາຍໃນກະຊວງ ແລະ ພາກສ່ວນກ່ຽວຂ້ອງ;
5. ສົ່ງເສີມການຄົ້ນຄວ້າ ແລະ ປະຍຸກນຳໃຊ້ ເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ຂອງນັກຄົ້ນຄ້ວາ, ນັກພັດທະນາ ແລະ ນັກຮຽນນັກສຶກສາ;
6. ເກັບກຳຂໍ້ມູນສະຖິຕິ ເພື່ອສ້າງດັດສະນີຕົວຊີ້ວັດການນຳໃຊ້ ແລະ ການພັດທະນາທາງດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ;
7. ພົວພັນ, ຮ່ວມມື ແລະ ຊອກຫາແຫຼ່ງທຶນພັດທະນາເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ທັງພາຍໃນ ແລະ ຕ່າງປະເທດ;
8. ປະຕິບັດໜ້າທີ່ ແລະ ສິດອື່ນໆ ຕາມການມອບໝາຍຂອງຄະນະກົມ.

7.4 ພະແນກ ເສດຖະກິດດິຈິຕອນ

1. ຄົ້ນຄວ້າສ້າງ, ປັບປຸງແຜນນະໂຍບາຍ ແລະ ຍຸດທະສາດ ດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ;
2 ຮ່າງກົດໝາຍ, ນິຕິກຳລຸ່ມກົດໝາຍ ແລະ ລະບຽບການດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ;
3. ຄົ້ນຄ້ວາ ແລະ ສະເໜີອອກແຈ້ງການ, ຄຳສັ່ງ, ຂໍ້ແນະນຳ ກ່ຽວກັບການປະຕິບັດຂໍ້ຕົກລົງ ແລະ ລະບຽບການອື່ນໆ;
4. ໂຄສະນາ ເຜີຍແຜ່ ນະໂຍບາຍ, ນິຕິກຳ ແລະ ລະບຽບການດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ;
5. ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດນະໂຍບາຍ ແລະ ນິຕິກຳດ້ານເຕັກໂນໂລຊີການສືສານຂໍ້ມູນຂ່າວສານ ຂອງພາກລັດ ແລະ ເອກະຊົນ;
6. ຮ່ວມມືກັບ ພາກສ່ວນກ່ຽວຂ້ອງ ໃນວຽກງານນະໂຍບາຍ, ແຜນຍຸດທະສາດ ແລະ ແຜນພັດທະນາເສດຖະກິດ ທີ່ຕິດພັນກັບການນຳໃຊ້ເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ແລະ ການບໍລິການທາງດ້ານເອເລັກໂຕຼນິກ;
7. ປະຕິບັດໜ້າທີ່ ແລະ ສິດອື່ນໆ ຕາມການມອບໝາຍຂອງຄະນະກົມ.

## ໝວດທີ 4
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 8 ຫຼັກການ**

8.1 ປະຕິບັດຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະກ່ຽວກັບບັນຫາລວມຂອງກົມ;

8.2 ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງຂອງພະນັກງານ-ລັດຖະກອນທຸກລະດັບ;

8.3 ທຸກການເຄື່ອນໄຫວວຽກງານ ແມ່ນອີງໃສ່ກົດໝາຍ, ລະບຽບການ, ຫຼັກການລວມຂອງພັກ-ລັດຖະບານ ນຳເອົາແນວທາງນະໂຍບາຍຂອງພັກ-ລັດຖະບານ ແລະ ນຳເອົາແຜນການປະຈຳປີ, ແຜນ 5ປີ ຂອງກະຊວງມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

**ມາດຕາ 9 ແບບແຜນວິທີເຮັດວຽກ**

9.1 ເຮັດວຽກມີແຜນການ, ແຜນງານ ແລະໂຄງການລະອຽດ, ແກ້ໄຂວຽກງານຢ່າງມີຈຸດສຸມ, ມີເປົ້າໝາຍໃນແຕ່ລະໄລຍະ ແລະ ປະສານສົມທົບຢ່າງແໜ້ນແຟ້ນກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຮັບປະກັນໃຫ້ພາລະບົດບາດໄດ້ຮັບການຈັດຕັ້ງປະຕິບັດເປັນຢ່າງດີ;

9.2 ເຮັດວຽກມີການກວດກາ, ຕິດຕາມຊຸກຍູ້, ສະຫຼຸບຖອດຖອນບົດຮຽນ, ຕີລາຄາຜົນໄດ້ຜົນເສຍ;

9.3 ປະຕິບັດລະບອບປະຊຸມ ປະຈຳເດືອນ, 3 ເດືອນ, 6 ເດືອນ ຫຼື ປະຈຳປີ ແລະ ປະຕິບັດລະບອບລາຍງານໃຫ້ຂັ້ນເທິງ ແລະ ລັດຖະບານເປັນປົກກະຕິ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 10 ງົບປະມານ ແລະ ຕາປະທັບ**

ກົມເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ມີງົບປະມານ ແລະ ຕາປະທັບເປັນຂອງຕົນເອງ ຕາມການແບ່ງປັນ ແລະ ອະນຸມັດ ຂອງກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເພື່ອຮັບໃຊ້ ແລະ ເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 11 ການຜັນຂະຫຍາຍ**

ມອບໃຫ້ກົມເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ເປັນຜູ້ອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານລະອຽດ ຂອງພະແນກທີ່ຂຶ້ນກັບກົມ ທີ່ໄດ້ລະບຸໄວ້ໃນມາດຕາ 5 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 12 ການຈັດຕັ້ງປະຕິບັດ**

ບັນດາການຈັດຕັ້ງທີ່ຂຶ້ນກັບກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 13 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງ ສະບັບເລກທີ 183/ປທສ, ລົງວັນ 01 ກຸມພາ 2016 ແລະ ມີຜົນສັກສິດນັບຕັ້ງແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ປອ. ທັບສະໄໝ ກົມມະສິດ